ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ກອງປະຊຸມທະວິພາຄີ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງຊາດ ກຳປູເຈຍ ຄັ້ງທີ 13 ແລະ ພິທີເປີດໂຕລະບົບການຊຳລະຂ້າມແດນ ລາວ-ກຳປູເຈຍ (KHQR scan LAOQR)




ໃນຕອນເຊົ້າຂອງວັນທີ 18 ສິງຫາ 2023 ທີ່ ນະຄອນຫຼວງວຽງຈັນ. ກອງປະຊຸມທະວິພາຄີ ລະຫວ່າງ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານແຫ່ງຊາດກຳປູເຈຍ (ທຫຈ) ຄັ້ງທີ 13 ໄດ້ໄຂຂຶ້ນ ໂດຍການນຳພາຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ແລະ ທ່ານ ນາງ ເຈຍ ຊະໄຣ (H.E. Chea Serey) ຜູ້ວ່າການທະນາຄານແຫ່ງຊາດ ກຳປູເຈຍ ພ້ອມດ້ວຍຄະນະຜູ້ແທນຂອງທັງສອງຝ່າຍເຂົ້າຮ່ວມ.

ພາຍໃນກອງປະຊຸມດັ່ງກ່າວ, ທັງສອງຝ່າຍໄດ້ປຶກສາຫາລືກັນ ເພື່ອແລກປ່ຽນບັນຫາ ແລະ ສິ່ງທ້າທາຍກ່ຽວກັບເສດຖະກິດມະຫາພາກ, ການຈັດຕັ້ງປະຕິບັດນະໂຍບາຍເງິນຕາ, ການພັດທະນາເສດຖະກິດ, ນະໂຍບາຍການຄຸ້ມຄອງເງິນຕາຕ່າງປະເທດ, ການພັດທະນາຂະແໜງການທະນາຄານ, ການກໍ່ສ້າງບຸກຄະລາກອນ ພ້ອມທັງຮັບຟັງລາຍງານຄວາມຄືບໜ້າການເຊື່ອມຕໍ່ລະບົບການຊຳລະ ລະຫວ່າງ ລາວ-ກຳປູເຈຍ, ລາຍງານການຮ່ວມມືລະຫວ່າງ ທຫລ ແລະ ທຫຈ ໃນໄລຍະຜ່ານມາ ແລະ ສະເໜີແຜນການຮ່ວມມື ປະຈຳປີ 2023.




ຫຼັງຈາກນັ້ນ, ໄດ້ມີພິທີເປີດໂຕຜະລິດຕະພັນການຊຳລະຂ້າມແດນ ລາວ-ກຳປູເຈຍ (KHQR scan LAOQR) ດ້ວຍການນຳໃຊ້ສະກຸນເງິນທ້ອງຖິ່ນ Lao Kip ແລະ Khmer Riel ໃນການຊຳລະຄ່າສິນຄ້າ ແລະ ບໍລິການຜ່ານ QR Code ຂຶ້ນ, ໂດຍມີຄະນະຜູ້ອຳນວຍການ, ຄະນະກຳມະການຈາກສອງທະນາຄານກາງ, ບໍລິສັດ LAPNet, ຄະນະອຳນວຍການຈາກທະນາຄານເອຊີລີດາ ກຳປູເຈຍ, ທະນາຄານ ເອຊີລີດາ ລາວ ຈຳກັດ ແລະ ທະນາຄານທຸລະກິດຈາກ ສປປ ລາວ ເຂົ້າຮ່ວມໃນພິທີດັ່ງກ່າວ. ໃນນີ້, ຜະລິດຕະພັນການຊຳລະຂ້າມແດນ ລາວ-ກຳປູເຈຍ (KHQR scan LAOQR) ແມ່ນໝາກຜົນຂອງການຮ່ວມມືລະຫວ່າງ ທຫລ ແລະ ທຫຈ ທີ່ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈລະຫວ່າງ ທຫລ ກັບ ທຫຈ ກ່ຽວກັບການຮ່ວມມືໃນຂົງເຂດນະວັດຕະກຳການເງິນ ແລະ ລະບົບການຊຳລະ ທີ່ນະຄອນຫຼວງພະນົມເປັນ, ປະເທດກຳປູເຈຍ ໃນທ້າຍປີ 2022 ທີ່ຜ່ານມາ, ເພື່ອເປັນການສະໜັບສະໜູນການພັດທະນາເຕັກໂນໂລຊີທາງການເງິນ ແລະ ການຊຳລະ ກໍ່ຄືເຮັດໃຫ້ການຊຳລະຢູ່ພາຍໃນປະເທດ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃຫ້ມີປະສິດທິພາບ ພ້ອມທັງສະໜັບສະໜູນການນຳໃຊ້ສະກຸນເງິນທ້ອງຖິ່ນ Lao Kip ແລະ Khmer Riel ເຂົ້າໃນການຊຳລະຄ່າສິນຄ້າ ແລະ ບໍລິການຕ່າງໆ ຂ້າມແດນຮ່ວມກັນຜ່ານ QR Code ທີ່ໄດ້ມາດຕະຖານສາກົນ ເປັນເຕັກໂນໂລຊີທີ່ທັນສະໄໝ, ສະດວກ, ວ່ອງໄວ ແລະ ປອດໄພ.



ການເຊື່ອມຕໍ່ລະບົບການຊໍາລະຂ້າມແດນຮ່ວມກັນດັ່ງກ່າວ ເປັນການເຊື່ອມຕໍ່ໃນຮູບແບບການເຊື່ອມຕໍ່ລະບົບ Switching (ລະບົບການຊໍາລະຂ້າມທະນາຄານເທິງມືຖືຂອງບໍລິສັດ LAPNet) ກັບ Sponsoring (ລະບົບຂອງທະນາຄານເອຊີລີດາ ກໍາປູເຈຍ) ໃນໄລຍະທີ 1 ກໍ່ຄື ກໍາປູເຈຍສະແກນລາວ (KHQR scan LAOQR) ຊຶ່ງໃນເບື້ອງຕົ້ນ ແມ່ນມີທະນາຄານທຸລະກິດຂອງ ສປປ ລາວ ຈໍານວນ 8 ແຫ່ງ (BCEL, ACLEDA Bank Lao, Kbank Lao, BIC, APB, LVB, Indochina ແລະ STB) ເຂົ້າຮ່ວມໃຫ້ບໍລິການຮັບຊໍາລະ. ໝາຍຄວາມວ່າ ນັກທ່ອງທ່ຽວກໍາປູເຈຍ ທີ່ເດີນທາງມາ ສປປ ລາວ ຈະສາມາດຊໍາລະຄ່າສິນຄ້າ ແລະ ບໍລິການໄດ້ດ້ວຍການສະແກນ QR Code ຢູ່ຕາມຮ້ານຄ້າທີ່ມີປ້າຍ QR Code ຂອງທະນາຄານທີ່ໃຫ້ບໍລິການຮັບຊໍາລະຕັ້ງຢູ່. ສໍາລັບໄລຍະທີ 2 ແມ່ນ ລາວສະແກນກໍາປູເຈຍ (LAOQR scan KHQR) ແມ່ນຄາດໝາຍວ່າຈະເປີດໃຫ້ບໍລິການໄດ້ພາຍຫຼັງໄຕມາດ IV ຂອງປີ 2023 ນີ້.

**# ຂ່າວ-ພາບ: ວັນປະເສີດ ສີມບຸນຂັນ.**

*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*